ຂະແໜງ ມາດຕະຖານ ວັດແທກ, ພວຕ ບໍ່ແກ້ວ ລົງກວດຊິງຊັງຄໍາ ໃນທົວແຂວງ
Written by Administrator
Friday, 01 March 2019 06:29 - Last Updated Friday, 01 March 2019 07:02
 ໃນວັນທີ່ 28 ກຸມພາ 2019 ຂະແໜງ ມາດຕະຖານ ແລະ ການວັດແທກ, ພະແນກ ວິທະຍາສາດ ແລະ
ເຕັກໂນໂລຊີ ແຂວງບໍ່ແກ້ວ ໄດ້ລົງຕິດຕາມກວດກາ, ກວດສອບ, ສອບທຽບ ຊິງຊັງວັດທຸມີຄ່າ
(ເງິນ-ຄໍາ) ຢູ່ຕາມທ້ອງຕະຫຼາຍໃນທົ່ວເທດສະບານແຂວງບໍ່ແກ້ວ, ໃນນີ້ໄດ້ຖືເອົາ
ຮ້ານຂາຍເງິນ-ຄຳ ນາງວຽງເງິນ ທີ່ຕັ້ງຢູ່ຕະຫຼາດ ສີດອນມີ, ບ້ານພິບຸນທອງ, ເມືອງຫ້ວຍຊາຍ,
ແຂວງບໍ່ແກ້ວ ເປັນຈຸດເປີດພິທີ ເຂົ້າຮ່ວມດ້ວຍທ່ານ ໄພວັນ ສ້ອຍທອງ ຮອງຫົວໜ້າ ພະແນກ
ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງບໍ່ແກ້ວ, ມີເຈົ້າຂອງຮ້ານຂາຍເງິນ-ຄໍາ ແລະ ວິຊາການ
ຂະແໜງ ມາດຕະຖານ ແລະ ການວັດແທກເຂົ້າຮ່ວມ. ການຈັດຕັ້ງປະຕິບັດຄັ້ງນີ້
ໄດ້ຖືເອົາການກວດກາປະຈໍາປີ ເປັນປົກກະຕິ ເພື່ອເຮັດໃຫ້ຊິງຊັງ ວັດທຸມີຄ່າ (ເງິນ-ຄໍາ)
ມີຄວາມຖືກຕ້ອງ ສອດຂ້ອງກັບມາດຕະຖານ ທີ່ໄດ້ກໍານົດໄວ້ນັ້ນ ທາງວິຊາການ ຂະແໜງມາດຕະຖານ
ແລະ ການວັດແທກ ແມ່ນໄດ້ເອົາໃຈໃສ່ ໃນການຈັດຕັ້ງປະຕິບັດຢ່າງກົງໄປກົງມາ
ດ້ວຍຄວາມຮັບຜິດຊອບສູງ ແລະ ຕໍ່ກັບເຈົ້າຂອງຮ້ານຜູ້ປະກອບການ
ແມ່ນໄດ້ໃຫ້ຄວາມຮ່ວມມື້ເປັນຢ່າງດີ. ໃນນີ້
ຮ້ານຂາຍເງິນ-ຄໍາ ຂອງນາງວຽງເງິນ ກໍ່ແມ່ນຮ້ານໜຶ່ງທີ່ໄດ້ຮັບການກວດກາ
ເຫັນວ່າຊິງຊັງຮ້ານດັ່ງກ່າວ ແມ່ນມີຄວາມ ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ ໃນມາດຕະຖານ,
ເຈົ້າຂອງຮ້ານຍັງໄດ້ອະທິບາຍເຖິງຄຸນນະພາບຂອງເງິນ-ຄໍາ ທີ່ໄດ້ນໍາມາຂາຍ ແລະ
ຈໍາໜ່າຍແມ່ນມີຄຸນນະພາບສູງ ເປັນເງິນ-ຄໍາທີ່ຜ່ານການກັນຕອງ ແລະ ກັກ
ເພື່ອໃຫ້ໄດ້ຄຸນນະພາບ ເປັນຄໍາ 999.9 ເປີເຊັນຂຶ້ນໄປ ຖ້າທຽບໃສ່ຫຼາຍໆ
ຫ້າງຮ້ານແມ່ນມີຄຸນນະພາບດີກວ່າ ເປັນທີນິຍົມຂອງລູກຄ່າ ທີ່ມາບໍລິການຊື້-ຂາຍ, ແລກປ່ຽນ
ອີກຢ່າງທາງຮ້ານ ຍັງມີໃບຮັບປະກັນຫຼັງການຂາຍ ເຊິ່ງລະບຸລາຍລະອຽດຂອງຄໍາອີກດ້ວຍ.
ຂ່າວ ແລະ ພາບໂດຍ: ປະກາສິດ ທໍາມະວົງ
 1 / 1